ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ...371........
ວັນທີ 29/7/2015
ໂທລະສັບ 021 217770

ເລກທີ: 29 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 28 ກໍລະກົດ 2015

## ລາຍງານການເຄື່ອນໄຫວປະຈຳອາທິດ
## ທີ 13/07/2015 ຫາ 17/07/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

##### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 30/06/2015 | ອາທິດນີ້ 07/07/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ (–) |
|---|---|---|---|
| ເອີໂຣ/ ໂດລາ | 1,1013 | 1,0998 | 0,13% |
| ໂດລາ/ເຢນ | 122,65 | 123,45 | 0,65% |
| ໂດລາ/ບາດ | 33,90 | 34,03 | -0,37% |
| ໂດລາ/ເປໂຊ | 45,15 | 45,15 | 0,09% |
| ໂດລາ/ຣູເປັຍ | 13.312,56 | 13.326,22 | 0,10% |
| ໂດລາ/ໂດລາສິງກະໂປ | 1,3534 | 1,3609 | -0,55% |
| ໂດລາ/ຢວນ | 6,2092 | 6,2082 | -0,02% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 2,78% ຈາກ 53,36 ໂດລາ/ບາເຣວ ມາເປັນ 51,88 ໂດລາ/ບາເຣວ ແລະ ລາຄາຄຳໃນຕະຫຼາດໂລກຫຼຸດລົງ 1,13% ຈາກ 1.167,71 ໂດລາ/ອອນ ມາເປັນ 1.154,46 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,03% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,10% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,50% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,75% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,50% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,41% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 2,46% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 3,91% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 07/07/2015 | | | ອາທິດນີ້ 14/07/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.104,69 | 8.130,05 | 8.121,11 | 8.104,00 | 8.135,89 | 8.119,04 | -0,008% | -0,07% | -0,03% |
| ບາດ | 242,45 | 243,42 | 243,04 | 240,79 | 242,03 | 241,83 | 0,69% | 0,58% | 0,50% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.121,95 | 8.150,00 | 8.135,98 | 8.129,32 | 8.159,00 | 8.144,16 | -0,09% | -0,11% | -0,10% |
| ບາດ | 242,97 | 244,93 | 243,95 | 241,21 | 243,07 | 242,14 | 0,73% | 0,77% | 0,75% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,21% | 0,25% | 0,18% | 0,31% | 0,28% | 0,31% | | | |
| ບາດ | 0,21% | 0,62% | 0,37% | 0,18% | 0,43% | 0,13% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 3,73% ທຽບໃສ່ວັນທີ 10/07/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 40,85%;
- ປະລິມານເງິນ M2 ຫຼຸດລົງ 0,22% ເມື່ອທຽບໃສ່ວັນທີ 10/07/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 17,21%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 15/07/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 20,14 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 74,42 ລ້ານໂດລາ ແລະ ຂາຍໂດລາໄດ້ 54,28 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.774,50 ລ້ານບາດ (ໃນນີ້ ຊື້ບາດໄດ້ 363,53 ລ້ານບາດ ແລະ ຂາຍບາດໄດ້ 2.138,04 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 15,70% ແລະ ຫຼຸດລົງ 9,23% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 1,74 ລ້ານໂດລາ ແລະ ເງິນບາດມີຈຳນວນ 108,51 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 14,16 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 193,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 69,08 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 1.390,84 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 23/06/2015 | | ອາທິດທີ 29/07/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 18,57 | 164,44 | 17,14 | 122,14 | -7,70% | -25,73% |
| - ທ/ຄທຸລະກິດອື່ນໆ | 87,83 | 252,63 | 57,28 | 241,40 | -34,78% | -4,45% |
| ລວມຊື້: | **106,40** | **417,08** | **74,42** | **363,53** | **-30,05%** | **-12,84%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 21,28 | 198,39 | 26,47 | 207,73 | 24,42% | 4,71% |
| - ທ/ຄທຸລະກິດອື່ນໆ | 25,00 | 2,140,52 | 27,81 | 1,930,31 | 11,26% | -9,82% |
| ລວມຂາຍ: | **46,27** | **2,338,91** | **54,28** | **2,138,04** | **17,31%** | **-8,59%** |
| ຊື້-ຂາຍສຸດທິ ທທກ | **60,12** | **-1,921,83** | **20,14** | **-1,774,50** | **-66,51%** | **-7,67%** |
| ຜິດດ່ຽງ ຊື້-ຂາຍ | 56,51 | -460,79 | 27,06 | -488,13 | -294,00% | -273,05% |
| ມູນຄ່າການຊື້-ຂາຍ | **152,67** | **2,755,99** | **128,70** | **2,501,57** | **-15,70%** | **-9,23%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 00,00 | 0,00 | 2,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 54,80 | 195,10 | 16,16 | 193,00 | | |
| ຊື້-ຂາຍສຸດທິ ທຫລ | **-54,80** | **-195,10** | **-14,16** | **-193,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **6,80** | **293,83** | **1,74** | **108,51** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,09 | 1,127,87 | 110,48 | 1,390,84 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 33,51 | 00,00 | 41,40 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-33,42** | **1,127,87** | **-69,08** | **1,390,84** | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 07/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,23% ຫຼຸດລົງ 0,14% ຈາກ 1,37% ໃນເດືອນ 06/2015.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 192,12 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 119,7% ທຽບໃສ່ອາທິດຜ່ານມາ.

**2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 957 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 31,45% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 1.276,35 ຕື້ກີບ ເພີ່ມຂຶ້ນ 44,18% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (10-16/07/2015) ມີຈໍານວນ 1.493 ຄັ້ງ ໂດຍມີມູນຄ່າ 857,73 ຕື້ກີບ ເພີ່ມຂຶ້ນ 1,3% ຊຶ່ງທະນາຄານການຄ້າຕ່າງປະເທດລາວມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 358 ຄັ້ງ.

**2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 1.325,95 ຈຸດ ຫຼຸດລົງ 3,39% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 407.064 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,54 ຕື້ກີບ ເພີ່ມຂຶ້ນ 468,59% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 65,53% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.984 ກີບ/ຮຸ້ນ ຫຼຸດລົງ 67 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 69.797 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 417,68 ລ້ານກີບ ເພີ່ມຂຶ້ນ 32,35% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 45,41% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,69%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.929 ກີບ/ຮຸ້ນ ຫຼຸດລົງ 262 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 284.807 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,97 ຕື້ກີບ ເພີ່ມຂຶ້ນ 1.451,62% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 78,84% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,29%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.975 ກີບ/ຮຸ້ນ ເພີ່ມຂຶ້ນ 174 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 133 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,06 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.996 ກີບ/ຮຸ້ນ ຫຼຸດລົງ 4 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 52.327 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 156,78 ລ້ານກີບ ເພີ່ມຂຶ້ນ 10.127,07% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 49,12% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,67%[5].

**3. ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສໍາເລັດການເຂົ້າຮ່ວມກອງປະຊຸມ: ❶ກອງປະຊຸມປຶກສາຫາລືກ່ຽວກັບ ການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງບໍລິຫານລະບົບການນໍາໃຊ້ບັດທະນາຄານຮ່ວມກັນ ລະຫວ່າງທະນາຄານຮ່ວມໃນ ສປປ ລາວ ຫຼື LAPS, ❷ກອງປະຊຸມປຶກສາຫາລື ຄັ້ງທີ II ກ່ຽວກັບການເປັນເຈົ້າພາບເວທີແລກປ່ຽນບົດຮຽນອາຊຽນຈີນ ຄັ້ງທີ 9 ທີ່ຫ້ອງວ່າການລັດຖະບານ, ❸ກອງປະຊຸມເປີດກວ້າງ ປຶກສາຫາລືກ່ຽວກັບຮ່າງແນະນໍາວ່າດ້ວຍການລາຍງານທຸລະກິດທີ່ສົງໃສວ່າເປັນການຟອກເງິນ ທີ່ໂຮງແຮມລ້ານຊ້າງ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສຳເລັດການຕ້ອນຮັບຄະນະອົງການຮ່ວມມືສາກົນຍີ່ປຸ່ນ, ປະຈຳ ສປປ ລາວ (JICA) ທີ່ ທະນາຄານແຫ່ງ ສປປ ລາວ;
- ສຳເລັດການເຂົ້າຮ່ວມສຳມະນາ: ❶ໃນຫົວຂໍ້ "Financial programing" ຢູ່ຫຼວງພະບາງ, ❷ໃນຫົວຂໍ້ "Privatization and Financial Reforms" ຢູ່ສູນລາວ-ສິງກະໂປ;
- ສຳເລັດການເຜີຍແຜ່ນິຕິກຳ ກ່ຽວກັບວຽກງານການຄຸ້ມຄອງສະຖາບັນການເງິນໃຫ້ແກ່ ອົງການແນວລາວສ້າງຊາດ ແລະ ສູນກາງຊາວໜຸ່ມ.

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ງວດ 5 ຊຸດ 2 ຈຳນວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ຄົ້ນຄວ້າຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຍັດຕິ 1267,1373 ຂອງສະພາຄວາມໝັ້ນຄົງ ສປຊ, ❸ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❹ສືບຕໍ່ຄົ້ນຄວ້າຮ່າງດຳລັດວ່າດ້ວຍປົກປ້ອງຜູ້ບໍລິໂພກທາງການເງິນ;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ຄັດເລືອກຜົນງານ 10 ປີ ຂອງກົມກອງ ແລະ ບຸກຄົນ (2005-2015).

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ພາສີ ພົມມະກອນ